# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 30 ເມສາ 2017 (4-30-2017)

---

## ຊີວິດໃນຄຣິສຕະຈັກ

ແມ່ນຫຍັງຄືສິ່ງທີ່ທ່ານມັກຫຼາຍທີ່ສຸດກ່ຽວກັບຄຣິສຕະຈັກ?

**ຈຸດສຳຄັນໃນບົດຮຽນ**: ຂ້າພະເຈົ້າຮັກແລະຮັບໃຊ້ພຣະຄຣິດເມື່ອຂ້າພະເຈົ້າຮັກແລະຮັບໃຊ້ຄຣິສຕະຈັກຊຶ່ງເປັນພຣະກາຍຂອງພຣະອົງ?

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ມັນຄືກັນກັບການຢືນຢູ່ຈອມປາຍແຫຼມຂອງທາງແຍກ, ຍົກເວັ້ນທີ່ນທາງນັ້ນແຍກໄປເປັນສິບສອງເສັ້ນທາງ. ຂ້າພະເຈົ້າກຳລັງຕຽມຈະຈົບການສຶກສາຂັ້ນວິທະຍາລັຍແລະກໍຕົກສະທ້ານໃຈເພາະວ່າຂ້າພະເຈົ້າບໍ່ມີຄວາມຄິດວ່າຈະໃຊ້ຊີວິດແນວໃດ. ແລະມັນເປັນເຊັ່ນນັ້ນກໍເພາະວ່າຂ້າພະເຈົ້າບໍ່ມີຄວາມຄິດອັນຈິງຈັງກ່ຽວກັບວ່າຂ້າພະເຈົ້າຢາກຈະມີອາຊີບອັນໃດແທ້ໃນຕອນນັ້ນຂອງຊີວິດ. ຕລອດທັງ16 ປີຂອງຊີວິດການສຶກສາ, ຂ້າພະເຈົ້າໄດ້ຮຽນຫຼາຍສິ່ງຫຼາຍຢ່າງກ່ຽວກັບຄົນອື່ນ, ແຕ່ວ່າເກືອບວ່າບໍ່ມີຫຍັງເລີຍກ່ຽວກັບຊີວິດຂອງຕົວເອງ.

ທຸກສິ່ງທຸກຢ່າງໄດ້ຖືກປ່ຽນແປງໄປເມື່ອຂ້າພະເຈົ້າໄດ້ພົບບຸກຄະລິກຂອງຕົນເອງໃນພຣະຄຣິດ.

ເມື່ອຂ້າພະເຈົ້າໄດ້ມາຫາພຣະຄຣິດ, ຂ້າພະເຈົ້າໄດ້ມາທີ່ພຣະກາຍຂອງພຣະອົງ, ຄືຄຣິສຕະຈັກ. ບຸກຄະລິກຂອງຂ້າພະເຈົ້າໃນພຣະຄຣິດໄດ້ຖືກຫໍ່ຫຸ້ມຢູ່ໃນບຸກຄະລິກຂອງຂ້າພະເຈົ້າກັບຜູ້ທີ່ເຊື່ອອື່ນໆ. ນັ້ນເປັນຄວາມຈິງກັບທຸກໆຄົນທີ່ຕິດຕາມພຣະຄຣິດ. ພວກເຮົາພົບວ່າພວກເຮົາເປັນໃຜໃນພຣະຄຣິດ, ແລະພວກເຮົາດຳລົງຊີວິດຕາມບຸກຄະລິກນັ້ນ ໂດຍຜ່ານການມີສ່ວນຮ່ວມຂອງພວກເຮົາກັບຄຣິສຕຽນອື່ນໆ.

ຂະນະທີ່ທ່ານຄົ້ນຄວ້າຈຸດສຳຄັນຈາກພຣະຄຳ 1 ເປໂຕ 4 ໃນວັກນີ້, ທ່ານຈະເຫັນວ່າການຮັກແລະການຮັບໃຊ້ພຣະກາຍຂອງພຣະຄຣິດກໍແມ່ນການຮັກແລະການຮັບໃຊ້ສີສະຂອງພຣະກາຍນັ້ນ, ຄືພຣະຄຣິດນັ້ນເອງ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**<u>ການສຶກສາພຣະຄັມພີ</u>**

### 1. <u>1 ເປໂຕ 4:7</u>

*7. ຈຸດຈົບຂອງສິ່ງທັງປວງໃກ້ຈະມາເຖິງແລ້ວ. ເຫດສັນນັ້ນຈົ່ງມີສະຕິອັນດີຮອບຄອບແລະການບັງຄັບຕົນສຳລັບການອ້ອນວອນ.*

ຖ້າຫາກພວກເຮົາຕິດກັບພຣະຄຣິດ, ພວກເຮົາກໍຕິດກັບຜູ້ທີ່ເຊື່ອຄົນອື່ນໆເຊັ່ນດຽວກັນ. ພຣະຄຳໄດ້ບັນລະຍາຍເຖິງຄຣິສຕະຈັກໃນຫຼາຍໆດ້ານ: ພຣະກາຍຂອງພຣະຄຣິດ (1 ໂກຣິນໂທ 12:27), ເຈົ້າສາວຂອງພຣະຄຣິດ (ພຣະນິມິດ 19:7-9), ແລະຄອບຄົວຂອງພຣະເຈົ້າ (ເອເຟໂຊ 2:19). ຄຳເວົ້າທີ່ມີພາບພົດເຫຼົ່ານີ້ຊັກນຳໄປເຖິງກຸນແຈແຫ່ງຄວາມຈິງກ່ຽວກັບຄຣິສຕະຈັກ: ພວກເຮົາຕ້ອງທຳງານຮ່ວມກັນ.

ໃນຈຸດລວມພຣະຄໍາວັກນີ້ຂອງພວກເຮົາ, ເປໂຕ ໄດ້ເລີ່ມຕົ້ນໂດຍການບອກຜູ້ທີ່ເຊື່ອວ່າ "ຈຸດຈົບຂອງສິ່ງທັງປວງໃກ້ຈະມາເຖິງແລ້ວ." "ຈຸດຈົບ" ຄໍານີ້ເລັງເຖິງຄາວສຸດທ້າຍທີ່ມະນຸດທັງປວງຈະຢືນຕໍ່ໜ້າພຣະເຢຊູ (ພຣະນິມິດ 20:11-12). ວັນສຸດທ້າຍຈະເປັນການເປີດສາກໂດຍຄວາມຕາຍແລະການຄືນພຣະຊົນຂອງອົງພຣະຄຣິດ; ພຣະຄໍາພີພາກພຣະສັນຍາໃໝ່ກ່າວເຖິງຊ່ວງນີ້ເລື້ອຍໆ ລະຫວ່າງການສະເດັດມາຄັ້ງທີນຶ່ງ ແລະຄັ້ງທີສອງຂອງພຣະອົງວ່າເປັນຄາວສຸດທ້າຍ (ໂຣມ 13:11-12; 1 ໂກຣິນໂທ 10:11; ເຮັບເຣີ 10:23-25).

ຈົ່ງເບິ່ງຄວາມກະທັດຮັດໃນສມັຍຂອງພວກເຮົາ, ທ່ານເປໂຕໄດ້ຊີ້ບອກສາມທາງທີ່ພວກທີ່ມີຄວາມເຊື່ອສາມາດຮັບໃຊ້ຊຶ່ງກັນແລະກັນ ແລະຈະເພີ້ມພລັງໃຫ້ຄຣິສຕະຈັກນໍາດ້ວຍ. ນຶ່ງ, "ພວກເຮົາໄດ້ຖືກບອກວ່າ ຈົ່ງມີສະຕິອັນດີຮອບຄອບແລະການບັງຄັບຕົນສໍາລັບການອ້ອນວອນ." ໃນຖານະທີ່ເປັນຄອບຄົວດຽວກັນຝ່າຍວິນຍານ, ພວກເຮົາຮັບຮູ້ຊຶ່ງກັນແລະກັນແລະຍົກຊຶ່ງກັນແລະກັນຂຶ້ນດ້ວຍຄໍາອ້ອນວອນອະທິຖານ. ໃນຖານະທີ່ເປັນສິດຍາພິບານ ຂ້າພະເຈົ້າບໍ່ສາມາດບອກທ່ານໄດ້ດອກວ່າມັນສໍາຄັນເຖິງຂນາດໃດສໍາລັບຕົວຂ້າພະເຈົ້າ. ຂ້າພະເຈົ້າຕ້ອງການຄໍາອ້ອນວອນອະທິຖານຈາກຜູ້ທີ່ເຊື່ອຄົນອື່ນໆ ແລະທ່ານກໍເຊັ່ນກັນ.

ພຣະເຢຊູບໍ່ໄດ້ໄຖ່ພວກເຮົາໃຫ້ເປັນລູກໂທນແຕ່ເທົ່ານັ້ນ. ພຣະອົງໄດ້ຮຽກເອີ້ນໃຫ້ພວກເຮົາຮັກພຣະອົງແລະຄອບຄົວຂອງພຣະອົງດ້ວຍ. ຖ້າວ່າພວກເຮົາຮັກຄຣິສຕະຈັກ ຄອບຄົວຂອງພຣະເຈົ້າ ພວກເຮົາກໍຈະອະທິຖານເພື່ອສະມາຊິກຂອງໂບດດ້ວຍ. ໂດຍການອ້ອນວອນອະທິຖານສໍາລັບຄຣິສຕະຈັກ, ພວກເຮົາກໍຮັບໃຊ້ຜູ້ທີ່ເຊື່ອຄົນອື່ນໆ. ຄໍາອ້ອນວອນອະທິຖານແມ່ນຂຶ້ນຢູ່ກັບພຣະເຈົ້າ, ແລະເມື່ອພວກເຮົາທາການນໍາຊີວິດຂອງຄົນອື່ນມາທີ່ບັນລັງແຫ່ງພຣະຄຸນຂອງພຣະເຈົ້າ, ພວກເຮົາກໍາລັງວາງຄວາມຕ້ອງການຂອງເຂົາເຈົ້າຕໍ່ພຣະພັກຂອງຜູ້ທີ່ຮັກ, ເປັນຫ່ວງ, ແລະສາມາດຕອບສນອງຄວາມຕ້ອງການຂອງເຂົາເຈົ້າຢ່າງເຕັມບໍຣິບູນ.

ພາກສ່ວນໃນການຄົ້ນພົບວ່າເຮົາເປັນໃຜນັ້ນແມ່ນການຄົ້ນພົບວ່າພຣະເຈົ້າໄດ້ສ້າງພວກເຮົາໃຫ້ເປັນນັກຕໍ່ສູ້ດ້ານການອ້ອນວອນອະທິຖານ. ຜູ້ທີ່ເຊື່ອທັງໝົດມີທາງຕິດຕໍ່ພົວພັນກັບພຣະເຈົ້າໂດຍຕົງ ເພາະວ່າຍ້ອນຄວາມເຊື່ອຂອງພວກເຮົາມີຢູ່ໃນພຣະເຢຊູ. ໃຫ້ພວກເຮົາໃຊ້ສາຍສັມພັນນັ້ນເພື່ອວອຍພອນຄຣິສຕະຈັກດ້ວຍຄໍາອະທິຖານອ້ອນວອນ.

| ເມື່ອໃດທີ່ທ່ານໄດ້ເຫັນຄໍາອ້ອນວອນອະທິຖານປາກົດເປັນຈິງໃນຊີວິດຂອງຄົນອື່ນໆ? |
|---|

## 2. 1 ເປໂຕ 4:8-9

*8. ເໜືອກວ່າສິ່ງອື່ນໆທັງໝົດ, ຈົ່ງຮັກເຊິ່ງກັນແລະກັນຢ່າງເຕັມໃຈ, ເພາະວ່າຄວາມຮັກປົກບັງຄວາມຜິດບາບໄວ້ຢ່າງຫຼວງຫຼາຍ. 9. ຈົ່ງຕ້ອນຮັບເຊິ່ງກັນແລະກັນໂດຍບໍ່ມີການຈົ່ມ.*

ເຖິງແມ່ນວ່າຄູ່ແຕ່ງງານທີ່ດີທີ່ສຸດ, ທີ່ຄົນທັງສອງຮັກກັນແລະກັນຫຼາຍກ່ວາສິ່ງອື່ນໃດ, ການຂັດແຍ້ງກໍຍັງປາກົດຂຶ້ນ. ມັນຫຼີກລ້ຽງບໍ່ໄດ້, ການຂັດແຍ້ງກໍເກີດຂຶ້ນໃນຄຣິສຕະຈັກດ້ວຍ. ແລະກໍເໝືອນກັບຊີວິດໃນການແຕ່ງງານ, ຄຣິສຕຽນແມ່ນຖືກຮຽກເອີ້ນໃຫ້ແກ້ໄຂຂໍ້ຂັດແຍ້ງດ້ວຍຄວາມຮັກ.

ທ່ານເປໂຕໄດ້ບອກພວກເຮົາວ່າ, ໃນແສງສວ່າງຂອງ "ຈຸດຈົບຂອງສິ່ງທັງປວງໃກ້ຈະມາເຖິງແລ້ວ," ພວກເຮົາຄວນຈະອ້ອນວອນອະທິຖານ. ໃນເຫດຜົນອັນດຽວກັນ, ທາງທີສອງທີ່ທ່ານເປໂຕໄດ້ສິດສອນພວກເຮົາໃຫ້ຮັບໃຊ້ຄອບຄົວຝ່າຍວິນຍານຂອງພວກເຮົາໃຫ້ເຕັມລົ້ນດ້ວຍຄວາມຮັກອັນຊາບຊຶ້ງຕໍ່ຊຶ່ງກັນແລະກັນ. ອັນນີ້ແມ່ນບໍ່ເຫັນແກ່ຕົວ, ກະຣຸນາປານີ, ຄວາມຮັກແທ້ທີ່ບໍ່ມີເງື່ອນໄຂທີ່ພຣະເຈົ້າໄດ້ບັນຈຸໄວ້ໃນໄພ່ພົນຂອງພຣະອົງ.

ຄວາມຮັກແບບນີ້ບໍ່ມີໂດຍອັດຕະໂນມັດຫຼືງ່າຍໆ. ມັນຕ້ອງໄດ້ອອກເຫື່ອເທແຮງໃນການຮັກສາຄວາມຮັກໃນສາຍສໍາພັນນັ້ນ. ຖ້າມກາງຊີວິດຂອງຜູ້ທີ່ເຊື່ອກໍບໍ່ແຕກຕ່າງເລີຍ ດັ່ງນັ້ນທ່ານເປໂຕຈຶ່ງໄດ້ບັນທຶກໄວ້ວ່າ, "ເໜືອກວ່າສິ່ງອື່ນໆທັງໝົດ, ຈົ່ງຮັກເຊິ່ງກັນແລະກັນຢ່າງເຕັມໃຈ."

ເມື່ອໃດທີ່ພວກເຮົາທຸ້ມເທເຫື່ອແຮງເພື່ອຮັກສາຄວາມຮັກຕໍ່ກັນແລະກັນ, ຄວາມຮັກນັ້ນ "ປົກບັງຄວາມຜິດບາບໄວ້ຢ່າງຫຼວງຫຼາຍ." ທ່ານເປໂຕບໍ່ໄດ້ຂຽນກ່ຽວກັບບາບຂອງພວກເຮົາທີ່ເຮັດຕໍ່ສູ້ພຣະເຈົ້າ. ຄວາມເຊື່ອຂອງພວກເຮົາໃນພຣະເຢຊູຄຣິດປົກບັງບາບນັ້ນແລ້ວ. ແທນທີ່ຈະເປັນແນວນັ້ນ, ທ່ານເປໂຕເລັງເຖິງການທີ່ພວກເຮົາກະທຳຜິດຕໍ່ຊຶ່ງກັນແລະກັນ. ຄວາມຮັກຂອງຂ້າພະເຈົ້າສຳລັບຄົນອື່ນນຳພາຂ້າພະເຈົ້າໃຫ້ເບິ່ງຂ້າມຄວາມຜິດຂອງເຂົາເຈົ້າທີ່ກະທຳຕໍ່ຂ້າພະເຈົ້ານັ້ນ. ຄວາມຮັກນຳພາພວກເຮົາໃຫ້ຜ່ານກາຍຄວາມເຈັບປວດແລະເບິ່ງຂ້າມຄວາມຜິດພາດຂອງຄົນນັ້ນ. ມີທາງໃດແດ່ທີ່ຄວາມຮັກປົກບັງບາດແຜທີ່ຖືກທຳລາຍໂດຍຄວາມບາບ? ຄຣິສຕະຈັກບໍ່ໄດ້ເຕັມໄປດ້ວຍຄົນທີ່ບໍຣິສຸດຜຸດຜ່ອງ; ດັ່ງນັ້ນ, ຄຣິສຕະຈັກຈຶ່ງເຕັມໄປດ້ວຍຄວາມຮັກອັນບໍຣິສຸດຂອງພຣະເຈົ້າ.

ທ່ານເປໂຕໄດ້ໃຫ້ຮູບພາບວ່າຄວາມຮັກຄວນຈະຄືແນວໃດ. ໃນການເຮັດແນວນີ້, ທ່ານໄດ້ບັນລະຍາຍທາງທີສາມຄືພວກເຮົາຕ້ອງຮັບໃຊ້ຄອບຄົວຝ່າຍຈິດວິນຍານຂອງພວກເຮົາ: "ຈົ່ງຕ້ອນຮັບເຊິ່ງກັນແລະກັນໂດຍບໍ່ມີການຈົ່ມ." ຈົ່ງ "ຕ້ອນຮັບ" ມີຄວາມໝາຍວ່າຕ້ອງມີໃຈກະຣຸນາປານີແລະການຍອມຮັບຄົນອື່ນໆ. ອັນນີ້ແມ່ນເຄື່ອງໝາຍມາດຕະຖານສູງຂອງຊຸມຊົນຄຣິສຕຽນ, ຊຶ່ງຮ້ອງໄດ້ອີກວ່າຄຣິສຕະຈັກ.

ທ່ານເປໂຕບໍ່ແມ່ນຜູ້ດຽວທີ່ຍົກສູງລະດັບຄວາມສຳຄັນຂອງການຕ້ອນຮັບແຂກໃນພຣະຄັມພີພາກພຣະສັນຍາໃໝ່. ທ່ານໂປໂລຮຽກເອີ້ນໃຫ້ຄຣິສຕຽນທຸກຄົນໃຫ້ຕິດຕາມການຕ້ອນຮັບແຂກໃນພຣະຄັມພີໂຣມບົດທີ 12:13, ແລະເພິ່ນໄດ້ລຽງລຳດັບການຕ້ອນຮັບຖ້າມກາງລະດັບຂັ້ນຕຳແໜ່ງຂອງຜູ້ນຳຄຣິສຕຽນ (ເບິ່ງ 1 ຕີໂມທຽວ 3:2; ຕີໂຕ 1:8). ການຕ້ອນຮັບແຂກຍົກຍ້າຍຄວາມຮັກໃຫ້ຫ່າງຈາກຄວາມຈິງທີ່ບໍ່ປາກົດໃຫ້ເຫັນ. ແທ້ຈິງ, ການຕ້ອນຮັບແຂກແມ່ນການທຳງານຂອງຄວາມຮັກ.

ເປັນຫຍັງການຕ້ອນຮັບແຂກຈຶ່ງເປັນພາກສ່ວນສຳຄັນຂອງຄອບຄົວຄຣິສຕະຈັກ?

### 3. 1 ເປໂຕ 4:10-11

*10. ແຕ່ລະຄົນຄວນໃຊ້ຕາມສິ່ງທີ່ຕົນໄດ້ຮັບອັນເປັນຂອງພຣະຣາຊທານໃຫ້ແລ້ວນັ້ນຮັບໃຊ້ຊຶ່ງກັນແລະກັນ, ເໝືອນເປັນຜູ້ຮັບມອບໝາຍທີ່ຮັບໃຊ້ພຣະຄຸນນາໆປະການຂອງພຣະເຈົ້າໃນຫຼາຍໆຮູບແບບຢ່າງສັດຊື່. 11 ຖ້າຜູ້ໃດກ່າວ, ຜູ້ນັ້ນຄວນຈະເຮັດເໝືອນດັ່ງຕົນກຳລັງກ່າວພຣະທັມຂອງພຣະເຈົ້າ. ຖ້າຜູ້ໃດເປັນຜູ້ບໍຣິການຮັບໃຊ້, ກໍໃຫ້ຜູ້ນັ້ນເຮັດດ້ວຍກຳລັງທີ່ພຣະເຈົ້າຊົງໂຜດປະທານໃຫ້, ເພື່ອວ່າໃນການທັງປວງພຣະເຈົ້າຈະຊົງໄດ້ຮັບການສັຣເສີນໂດຍຜ່ານທາງພຣະເຢຊູຄຣິດ. ຂໍໃຫ້ພຣະອົງໄດ້ຮັບສະງ່າຣາສີແລະຣິດທານຸພາບສືບໆໄປເປັນນິດ ອາແມນ.*

ທ່ານເຄີຍໄດ້ຄຶດບໍ່ວ່າເປັນຫຍັງພຣະເຈົ້າຈຶ່ງນຳຄົນຫຼາຍໆປະເພດມາໃນຄຣິສຕະຈັກ? ກໍເພາະວ່າພຣະອົງປະທານຂອງພຣະຣາຊທານໃຫ້ແຕ່ລະຄົນບໍ່ຄືກັນ. ແຕ່ລະຄົນໃນໂບດເປັນຂອງຂວັນຊຶ່ງນຳຂອງປະທານທີ່ຕົນມີຢູ່ນັ້ນມາທີ່ພຣະກາຍຂອງພຣະຄຣິດເພື່ອໃຫ້ເຂັ້ມແຂງຂຶ້ນ. ພວກເຮົາຕ້ອງການສະມາຊິກທຸກໆຄົນແລະຂອງປະທານຂອງເຂົາເຈົ້າ, ແລະເຂົາເຈົ້າກໍຕ້ອງການພວກເຮົາ.

ອັນນີ້ເປັນສິ່ງສຳຄັນ. ຄຣິສຕຽນຮູ້ຈັກວ່າເຂົາເຈົ້າຕ້ອງການພຣະເຢຊູ, ແຕ່ວ່າບາງຄັ້ງພວກເຮົາກໍຂາດການສັງເກດເຫັນວ່າພວກເຮົາຕ້ອງການຄຣິສຕຽນອື່ນໆເຊັ່ນກັນ. ພວກເຮົາບໍ່ໄດ້ຖືກສ້າງສຳລັບສະເພາະພວກເຮົາເອງ; ແທນທີ່ຈະເປັນຢ່າງນັ້ນ, ພວກເຮົາຖືກສ້າງເພື່ອຮັບໃຊ້ພຣະຄຣິດໂດຍການຮັບໃຊ້ພຣະກາຍຂອງພຣະອົງ, ຄືຄຣິສຕະຈັກ.

ສຳລັບເຫດຜົນນັ້ນແຫຼະ, ທ່ານໄດ້ຖືກຮຽກເອີ້ນໃຫ້ໃຊ້ຂອງປະທານຂອງທ່ານຮັບໃຊ້ອົງພຣະຜູ້ເປັນເຈົ້າແລະຄຣິສຕະຈັກຂອງພຣະອົງ. ຖ້ອຍຄຳທີ່ວ່າ, *"ແຕ່ລະຄົນຄວນໃຊ້ຕາມສິ່ງທີ່ຕົນໄດ້ຮັບອັນເປັນຂອງພຣະຣາຊທານໃຫ້ແລ້ວນັ້ນ"* ມີຄວາມໝາຍວ່າທ່ານໄດ້ຮັບຂອງປະທານນັ້ນແລ້ວຈາກພຣະເຈົ້າ. ໃຜກໍຕາມທີ່ໄດ້ວາງໃຈເຊື່ອໃນພຣະຄຣິດກໍໄດ້ຮັບຂອງປະທານຝ່າຍວິນຍານແລ້ວ ນຶ່ງໃນຈຳນວນຂອງປະທານເຫລົ່ານັ້ນກໍແມ່ນພຣະຄຸນອັນບໍຣິສຸດຂອງພຣະເຈົ້າ . ຂອງປະທານທັງໝົດນີ້ມີສ່ວນຮ່ວມໃນການຮັບໃຊ້ແລະການຊ່ວຍເຫຼືອຄົນອື່ນ...

ພຣະເຈົ້າປະທານຂອງພຣະຣາຊທານໃຫ້ທ່ານຢ່າງໃດ? ພຣະເຈົ້າຈະບອກເຕືອນທ່ານກ່ຽວກັບຂອງປະທານເຫຼົ່ານັ້ນໂດຍຣິດເດດພຣະວິນຍານຂອງພຣະອົງ, ແລະສ່ວນຫຼາຍພຣະອົງໃຊ້ສອງທາງນີ້:

1. **ຈາກຄົນອື່ນ.** ຫຼາຍໆຄັ້ງຄຣິສຕຽນຄົນອື່ນໆຈະເຫັນຂອງປະທານຕ່າງໆທີ່ທ່ານມີ ກ່ອນທີ່ທ່ານຈະເຫັນດ້ວຍຕົວທ່ານເອງ. ຄຣິສຕຽນທີ່ຢູ່ຮອບຂ້າງພວກເຮົາຈະຊ່ອຍພວກເຮົາໃຫ້ຄົ້ນພົບວິທີທີ່ພວກເຮົາສາມາດກ່າວຄວາມຈິງແລະຮັບໃຊ້ຄົນອື່ນໆ.
2. **ຈາກການກະທຳ.** ຂອງປະທານທີ່ມາຈາກພຣະເຈົ້າຈະປາກົດແຈ່ມແຈ້ງ, ບໍ່ພຽງແຕ່ຍາມພວກເຮົາສແວງຫາຂອງປະທານຈາກພຣະອົງ, ແຕ່ວ່າແມ່ນເມື່ອເຮົາລົງມືກະທຳແລະເລີ່ມຕົ້ນຮັບໃຊ້.

ຜູ້ທີ່ເຊື່ອທຸກໆຄົນແມ່ນຖືກຮຽກເອີ້ນໃຫ້ຮັບໃຊ້, ແຕ່ພຣະເຈົ້າຈະບໍ່ມອບໝາຍຂອງພຣະຣາຊທານນັ້ນຢ່າງຄົບເຕັມເທື່ອ ຈົນກ່ວາທ່ານຍອມຈຳນົນຕໍ່ພຣະອົງກ່ອນ. ພຣະອົງບໍ່ໄດ້ປະທານຂອງພຣະຣາຊທານທີ່ຄືກັນທັງໝົດໃຫ້ກັບພວກເຮົາ,ແຕ່ວ່າພຣະອົງໄດ້ຮຽກເອີ້ນພວກເຮົາທຸກຄົນທັງໝົດມາຮັບໃຊ້ອັນດຽວກັນ. ເມື່ອທ່ານຄົ້ນພົບບຸກຄະລິກຂອງທ່ານວ່າເປັນຜູ້ຮັບໃຊ້ພຣະເຈົ້າໃນຄຣິສຕະຈັກຂອງພຣະອົງ, ທ່ານຈະເຂົ້າໃຈຢ່າງຫຼວງຫຼາຍກ່ຽວກັບຕົວທ່ານເອງວ່າເປັນຜູ້ໃດກັນແທ້ ແລະຄວາມໝາຍແທ້ຈິງຂອງຜູ້ທີ່ທ່ານຈະກາຍເປັນ.

| ແມ່ນໂອກາດໃດທີ່ຊ່ອຍເຮັດໃຫ້ທ່ານຮູ້ສຶກຕື່ນເຕັ້ນໃນການໃຊ້ຂອງປະທານຂອງທ່ານຮັບໃຊ້ຄົນອື່ນໆ? |
| --- |

## <u>ນຳໃຊ້ໃນຊີວິດ:</u>

ທ່ານຈະຮັກແລະຮັບໃຊ້ພຣະຄຣິດໂດຍຜ່ານຄຣິສຕະຈັກຂອງພຣະອົງຢ່າງໃດໃນອາທິດນີ້? ຂໍສເນີໃຫ້ເຮັດຕາມນີ້.

- **ອະທິຖານ.** ຕັດສິນໃຈໃນການອ້ອນວອນອະທິຖານແຕ່ລະມື້, ຄຳອ້ອນວອນອະທິຖານກໍແມ່ນການໂອ້ລົມກັບພຣະເຈົ້າ. ໃຫ້ອະທິຖານເພື່ອຄຣິສຕະຈັກຂອງທ່ານແລະພວກທີ່ເປັນຜູ້ນຳ. ຮັບໃຊ້ເຂົາເຈົ້າໂດຍການອະທິຖານອ້ອນວອນເພື່ອເຂົາເຈົ້າ.

- **ຝຶກຊ້ອມການຕ້ອນຮັບແຂກ.** ຊອກຫາທາງທີ່ທ່ານສາມາດສະແດງຄວາມຮັກແລະຄວາມເມດຕາກະຣຸນາໃຫ້ຫຼາຍຂຶ້ນຕໍ່ຄົນທີ່ຢູ່ໃນຄຣິສຕະຈັກ, ໃນຄຸ້ມບ້ານ, ແລະໃນຄອບຄົວຂອງທ່ານ.

- **ສັງເກດເບິ່ງຂອງປະທານຂອງຄົນອື່ນ.** ສະມາຊິກທຸກໆຄົນໃນຄຣິສຕະຈັກຂອງພຣະເຈົ້າແມ່ນພຣະພອນ, ແຕ່ວ່າຄຣິສຕຽນສ່ວນຫຼາຍເບິ່ງບໍ່ເຫັນຕົວຂອງພວກເຂົາເຈົ້າໃນທາງນັ້ນ. ໜູນໃຈຄົນອື່ນໆໂດຍການຊີ້ແຈງຂອງປະທານທີ່ທ່ານເຫັນໃນຕົວເຂົາເຈົ້າ. ອວຍພອນຊຶ່ງກັນແລະກັນດ້ວຍຖ້ອຍຄຳທີ່ໜູນໃຈ, ສົ່ງຂໍ້ຄວາມ, ໂທຣະສັບຫາແລະອື່ນໆ.

ເຖິງແມ່ນວ່າທ່ານໄດ້ເປັນຄຣິສຕຽນມາໄດ້ຫຼາຍປີແລ້ວກໍຕາມ, ຫຼືທ່ານຫາກໍຄົ້ນພົບບຸກຄະລິກຂອງທ່ານໃນພຣະຄຣິດໃໝ່ ທ່ານມີການຕິດພັນອັນຍິ່ງໃຫຍ່ຕໍ່ຄຣິສຕະຈັກ. ຢ່າປະຖິ້ມຂອງປະທານອັນອັສຈັນນັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA**